# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທຄຕລ ປະຈຳໄຕມາດ 03/2018

ໃນວັນທີ 17-18 ຕຸລາ 2018, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງ ປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 03/2018 ຂຶ້ນທີ່ຫ້ອງປະຊຸມ ໂຮງແຮມຈຳປາສັກແກຣນ, ພາຍໃຕ້ການເປັນປະທານຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ໄດ້ຮັບກຽດເຂົ້າຮ່ວມຈາກ ທ່ານ ປອ. ບຸນເຫລືອ ສິນໄຊວໍຣະວົງ ປະທານສະພາບໍລິຫານ, ທ່ານ ພຸດທະຂັນ ຂັນຕິ ແລະ ທ່ານ ປອ. ພູເພັດ ກ້ຽວພິລາວົງ ກຳມະການສະພາບໍລິຫານ. ພ້ອມກັນນັ້ນ, ຍັງມີຫົວໜ້າພະແນກ, ສູນ ຈາກສຳນັກງານໃຫຍ່, ຄະນະສາຂາໃນທົ່ວລະບົບ ທຄຕລ ພ້ອມດ້ວຍພະ ນັກງານກ່ຽວຂ້ອງທັງໝົດ 70 ທ່ານ.



ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ໃນຂອບເຂດທົ່ວປະເທດ ໃນໄລຍະໄຕມາດ 03/2018 ເຊິ່ງໄດ້ຍົກໃຫ້ເຫັນຜົນສຳເລັດ, ບັນດາຂໍ້ຄົງຄ້າງໃນການປະຕິບັດງານແຕ່ລະດ້ານ ເພື່ອປຶກສາຫາລືການແກ້ໄຂໃຫ້ດີຂຶ້ນໃນຕໍ່ໜ້າ. ກອງປະຊຸມໄດ້ຮັບທິດຊີ້ນຳຈາກປະທານສະພາບໍລິຫານ, ກຳມະການສະພາບໍລິຫານ ໃນການປັບປຸງການປະຕິບັດງານ, ເນັ້ນຫນັກໃຫ້ ທຄຕລ ສືບຕໍ່ຄົ້ນຄວ້າການພັດທະນາ ປັບປຸງການບໍລິການ ແລະ ເອົາໃຈໃສ່ໃນການຄຸ້ມຄອງຄວາມສ່ຽງໃນແຕ່ລະດ້ານ ເພື່ອໃຫ້ຜົນການດຳເນີນທຸລະກິດຂອງ ທຄຕລ ມີປະສິດທິພາບ, ຜົນການດຳເນີນທຸລະກິດບັນລຸແຜນການທີ່ວາງໄວ້ ເພື່ອສ້າງຜົນປະໂຫຍດສູງສຸດໃຫ້ແກ່ຜູ້ຖືຮຸ້ນ.




ຈາກການລາຍງານ-ປຶກສາຫາລື ແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ ໃນກອງປະຊຸມ 2 ວັນ ໄດ້ມີບັນຍາກາດຟົດຟື້ນ ແລະ ມີປະສິດທິຜົນດີ. ມາຮອດໄຕມາດ 03/2018 ເຫັນໄດ້ວ່າຜົນການດຳເນີນທຸລະກິດໄດ້ຕາມແຜນການທີ່ວາງໄວ້.




ນອກຈາກນັ້ນ, ໃນວັນທີ **15-16** ຕຸລາ **2018** ທຄຕລ ກໍ່ຍັງໄດ້ຈັດກອງປະຊຸມແລກປ່ຽນບົດຮຽນກ່ຽວກັບມາດຖານການຈັດຂັ້ນສາຂາ ແລະ ຫນ່ວຍບໍລິການທົ່ວລະບົບ ທຄຕລ ແລະ ກອງປະຊຸມເຜີຍແຜ່ຄວາມຮູ້ພື້ນຖານກ່ຽວກັບວຽກງານການຄຸ້ມຄອງບໍລິຫານ (Corporate Governance) ໃຫ້ຄະນະສາຂາຂອງ ທຄຕລ ໄດ້ເຂົ້າໃຈ.